

# ບົດທີ 5
# ກິດຈະກຳສຳລັບເດັກນ້ອຍຕັ້ງແຕ່ມື້ເກີດຫາອາຍຸໄດ້ 6 ເດືອນ

ປົກກະຕິແລ້ວເດັກນ້ອຍເກີດໃໝ່ບໍ່ສົນໃຈວ່າຕົນເອງເຮັດຫຍັງຫຼາຍ. ລາວໃຊ້ເວລາຂອງລາວທັງໝົດ ກິນ, ນອນ ແລະ ພັກຜ່ອນ. ແຕ່ວ່າເຖິງຢ່າງໃດກໍ່ຕາມ ລາວອາດຈະເບິ່ງຄ້າຍຄືກັບວ່າບໍ່ຮູ້ຕົວກັບສິ່ງທີ່ຢູ່ອ້ອມຂ້າງຂອງລາວ, ເດັກນ້ອຍເກີດໃໝ່ແມ່ນຫາກໍເລີ່ມຕົ້ນຮຽນກ່ຽວກັບໂລກຂອງລາວ. ລາວເຮັດສິ່ງນີ້ໂດຍການໃຊ້ປະສາດທັງຫ້າຂອງລາວ: ການຟັງ, ສຳຜັດ, ໄດ້ກິ່ນ, ການຊີມ ແລະ ສາຍຕາ.

ເດັກນ້ອຍຜູ້ທີ່ຕາບອດ ຫຼືວ່າ ຜູ້ທີ່ບໍ່ສາມາດເຫັນດີ ເລີ່ມຕົ້ນຮຽນໄວເທົ່າ ທີ່ຈະໄວໄດ້ຄືຕັ້ງແຕ່ລາວເກີດ, ແຕ່ວ່າລາວຕ້ອງການຄວາມຊ່ວຍເຫຼືອຈາກເຈົ້າ ເພື່ອແນະນຳລາວສິ່ງໃດສິ່ງໜຶ່ງທີ່ລາວບໍ່ສາມາດເຫັນ.

ເຈົ້າສາມາດຊ່ວຍໂດຍໃຫ້ລາວມີໂອກາດຫຼາຍໃນການຟັງ, ຈັບ ແລະ ໄດ້ກິ່ນ, ຊຸກຍູ້ໃຫ້ລາວເພື່ອຊອກຫາສິ່ງທີ່ລາວຢາກຫຼິ້ນ.



ເຖິງວ່າເດັກນ້ອຍບໍ່ສາມາດເຫັນເຄື່ອງຫຼິ້ນ ຫຼືວ່າໜ້າຂອງຜູ້ຄົນ, ລາວບໍ່ຮູ້ວ່າມີຫຍັງທີ່ໜ້າສົນໃຈຢູ່ໃນໂລກນີ້ທີ່ຈະຊອກຫາ.




ລາວຕ້ອງການຄວາມຊ່ວຍເຫລືອຈາກເຈົ້າ ເພື່ອຄົ້ນຫາສິ່ງເຫລົ່ານັ້ນ.

ໃນເວລາທີ່ເຈົ້າເຮັດກິດຈະກຳຮ່ວມກັບລູກ ໃຫ້ເວົ້າລົມກັບລາວໄປນຳ. ເຖິງແມ່ນວ່າລາວຈະຍັງນ້ອຍເກີນໄປ ທີ່ຈະເຂົ້າໃຈຄຳເວົ້າຕ່າງໆທີ່ເຈົ້າເວົ້າອອກມາ ແຕ່ຄວນຄຳນຶງວ່າ ສຽງເປັນວິທີການໜຶ່ງທີ່ລາວຈະຮຽນຮູ້ກັບໂລກອ້ອມຂ້າງ. ລາຍລະອຽດໃນການຕິດຕໍ່ພົວພັນກັບເດັກກ່ຽວກັບກິດຈະກຳເຫລົ່ານີ້ ມີຢູ່ໃນບົດ “ການຕິດຕໍ່ພົວພັນ” ໃນໜ້າ 45




## ກິດຈະກຳ

ກິດຈະກຳຢູ່ໃນບົດນີ້ໄດ້ແບ່ງອອກເປັນສອງພາກ: ພາກທີໜຶ່ງສຳລັບເດັກນ້ອຍຕັ້ງແຕ່ມື້ເກີດຈົນຮອດອາຍຸໄດ້ສາມເດືອນ ແລະ ສຳລັບເດັກນ້ອຍອາຍຸຕັ້ງແຕ່ສີ່ເດືອນຫາອາຍຸຫົກເດືອນ. ເຫລົ່ານີ້ ແມ່ນອາຍຸເມື່ອເດັກນ້ອຍສາມາດເລີ່ມຕົ້ນໃຊ້ທັກສະພັນລະນາຢູ່ທີ່ນີ້. ແຕ່ວ່າຈຳໄວ້ວ່າມັນສາມາດໃຊ້ເວລາເປັນເດືອນສຳລັບເດັກນ້ອຍທີ່ຈະປ່ຽນທັກສະໃໝ່ໆອັນໜຶ່ງ. ດັ່ງນັ້ນ ເຈົ້າອາດຈະຕ້ອງການໃຊ້ສອງສາມທັກສະຢູ່ໃນເວລານັ້ນ ແລະ ຈື່ໄວ້ວ່າ ເດັກນ້ອຍແຕ່ລະຄົນຈະຮຽນກ້າວທ່າຍ່າງດ້ວຍຕົວຂອງລາວເອງ.

### ເດັກນ້ອຍແຕ່ມື້ເກີດຈົນອາຍຸໄດ້ສາມເດືອນ

ຊີວິດຢູ່ໃນສາມເດືອນທຳອິດ, ສິ່ງທີ່ເດັກນ້ອຍສາມາດຮຽນມີ:

- ລຶ້ງເຄີຍກັບສຽງ ແລະ ສຳນຽງ
- ເຮັດສຽງລົບກວນຜູ້ອື່ນຫຼາຍກວ່າ
- ຮູ້ວ່າຕີນ ແລະ ມືຂອງລາວ
- ຍົກຫົວຂອງລາວຂຶ້ນ
- ບອກໃຫ້ຮູ້ຄວາມແຕກຕ່າງລະຫວ່າງກິ່ນ
- ຈັບ ແລະ ສຳຜັດວັດຖຸ
- ມີຄວາມສຸກກັບການສຳຜັດວັດຖຸຫຼາຍຊະນິດແຕກຕາງກັນ
- ຊ່ວຍໃຫ້ອາລົມຂອງລາວສະຫງົບລົງ

## ການຊ່ວຍໃຫ້ເດັກນ້ອຍຂອງທ່ານຮຽນຮູ້ເຊື່ອຖືຜູ້ຄົນ ແລະ ສິ່ງອ້ອມຂ້າງຂອງລາວ.

ເດັກນ້ອຍຜູ້ທີ່ສາມາດເຫັນໄດ້ໄວເທົ່າທີ່ໄວໄດ້ ຮຽນສຽງທີ່ແນ່ນອນນັ້ນ, ສຳຜັດ ແລະ ດົມກິ່ນມາຈາກຄົນ ຫຼືວ່າ ວັດຖຸທີ່ແຕກຕ່າງກັນ. ນີ້ແມ່ນຊ່ວຍໃຫ້ລາວຮູ້ສຶກກັບບາງສິ່ງບາງຢ່າງ, ຮູ້ສຶກປອດໄພກັບມັນ ແລະ ຕ້ອງການຄົ້ນຫາມັນ. ແຕ່ສຽງ ຫຼືວ່າ ສຳນຽງ, ການສຳຜັດ ແລະ ກິ່ນ ສາມາດເຮັດໃຫ້ເດັກນ້ອຍຕາບອດຜູ້ໜຶ່ງຕົກໃຈ ຢ້ານ ເພາະວ່າພວກມັນເບິ່ງຄ້າຍຄືກັບວ່າມາຈາກບ່ອນໃດກໍ່ບໍ່ຮູ້. ລາວຕ້ອງການໃຫ້ຊ່ວຍເປັນພິເສດເພື່ອໃຫ້ເຂົ້າໃຈ ແລະ ຮູ້ສຶກປອດໄພຢູ່ໃນອ້ອມຂ້າງຂອງລາວ.

ທ່ານສາມາດຊ່ວຍໃຫ້ລາວເຂົ້າໃຈສຽງ ແລະ ສິ່ງນັ້ນຮູ້ສຶກວ່າມາຈາກບ່ອນຕ່າງກັນ. ຊ່ວຍລາວຮູ້ການຮຽນຮູ້ກ່ຽວກັບສິ່ງນັ້ນ ມັນມ່ວນ.




ຕັ້ງແຕ່ນັ້ນມາລູກຂອງທ່ານອາດຈະບໍ່ເຫັນກ່ຽວກັບ ສິ່ງທີ່ຈະເກີດຂຶ້ນ, ລາວຕ້ອງການໃຫ້ເຈົ້າບອກໃຫ້ລາວຮູ້ແມ່ນຫຍັງຈະເກີດຂຶ້ນຢູ່ຂ້າງໜ້າ. ຍົກຕົວຢ່າງ:

ສຳຜັດຂາຂອງລາວແບບເບົາໆ ກ່ອນປ່ຽນຜ້າອ້ອມຂອງລາວ. ບອກລາວວ່າ ເຈົ້າເຮັດຫຍັງ. ໃນໄວໆນີ້ລາວຈະຮູ້ຄາດຄະເນເວລາລາວຮູ້ສຶກສຳຜັດຢູ່ທີ່ຂາຂອງລາວ.




ສຳຜັດບ່າຂອງລາວເບົາໆ ກ່ອນຈະອູ້ມລາວຂຶ້ນ ບອກລາວກ່ຽວກັບສິ່ງທີ່ເຈົ້າຈະເຮັດໃນໄວໆນີ້ ລາວຈະຮູ້ວ່າ ສິ່ງທີ່ເຈົ້າສຳຜັດໝາຍຄວາມວ່າແນວໃດ.



## ການຊຸກຍູ້ໃຫ້ເດັກນ້ອຍຕອບຜູ້ຄົນ ແລະ ສຽງ

ເອົາເດັກນ້ອຍຢູ່ໃກ້ເຈົ້າເມື່ອລາວຮູ້ເມື່ອ. ລົມກັບລາວເລື້ອຍໆເພື່ອບອກໃຫ້ລາວຮູ້ວ່າ ເຈົ້າຢູ່ກັບລາວ. ລາວຈະຮຽນຈື່ຈຳສຳນຽງຂອງເຈົ້າ ແລະ ຕອບມັນ.




ຊຸກຍູ້ສະມາຊິກໃນຄອບຄົວລົມກັບລາວກ່ຽວກັບສິ່ງທີ່ພວກເຂົາກຳລັງເຮັດ. ຖ້າຫາກວ່າຄົນຜູ້ເກົ່າ ເຮັດກິດຈະກຳເກົ່າສະເໝີ ເຊັ່ນ: ອາບນ້ຳໃຫ້ເດັກນ້ອຍຜູ້ໜຶ່ງລາວຈະເລີ່ມຈື່ຈຳສະມາຊິກໃນຄອບຄົວໂດຍສິ່ງທີ່ພວກເຂົາເຮັດ.







ຊຸກຍູ້ໃຫ້ເດັກນ້ອຍຍິ້ມໃນຂະນະທີ່ລົມກັບລາວ. ລາວອາດຈະຍິ້ມອີກ ຖ້າຫາກວ່າ ເຈົ້າສຳຜັດຢ່າງເບົາໆຢູ່ທ້ອງຂອງລາວ ຫຼືວ່າ ຫຼິ້ນນິ້ວຕີນຂອງລາວ.

ຫຼິ້ນດົນຕີ ແລະ ຮ້ອງເພງ ເພື່ອລູກຂອງທ່ານ. ຖ້າຫາກວ່າ ລາວລອກແບບສຳນຽງ ພວກມັນຊຸກຍູ້ໃຫ້ລາວໃຊ້ສຽງຂອງລາວ.






ເມື່ອລູກຂອງທ່ານເລີ່ມເວົ້າ, ຫຼິ້ນກັບລາວໂດຍການຈັບມືຂອງລາວໃສ່ຄໍ ແລະ ປາກຂອງທ່ານ ໃນຂະນະທີ່ທ່ານເວົ້າຄືນ. ນອກຈາກນັ້ນວິທີນີ້ຍັງຊ່ວຍໃຫ້ລາວຮຽນຮູ້ສຽງມາຈາກໃສ.

## ການຊ່ວຍໃຫ້ລູກຂອງທ່ານຮູ້ສຶກໂຕກັບຂາ ແລະ ມືຂອງລາວ ແລະ ການໃຊ້ມືຂອງລາວຈັບວັດຖຸ.

ເມື່ອເວລາເອົາລູກກິນນົມ ຍູ້ມືລາວຄ່ອຍໆສູງຂຶ້ນ ເພື່ອໃຫ້ລາວວາງມືຂອງລາວໃສ່ນົມຂອງເຈົ້າ. ນີ້ແມ່ນຊ່ວຍໃຫ້ລາວຮູ້ກຽມພ້ອມຈັບວັດຖຸແທ້ໆ, ນອກຈາກນັ້ນ ການໃຫ້ອາຫານເດັກນ້ອຍແມ່ນເປັນເວລາທີ່ດີທີ່ຈະລົມ ຫຼືວ່າ ຮ້ອງເພງໃຫ້ລູກຂອງເຈົ້າຟັງ.




ພະຍາຍາມມັດເຄື່ອງຫຼິ້ນອັນໜຶ່ງ ເຮັດໃຫ້ມີສຽງຄືກັບກະລິ່ງນ້ອຍໆ ອັນໜຶ່ງ, ມີແກ່ນອັນໜຶ່ງ, ຫຼືວ່າ ປອກແຂນ - ຢູ່ເທິງຂໍ້ມື ຫຼືວ່າ ຂໍ້ຕີນ. ລາວຈະພະຍາຍາມຊອກຫາສຽງກັບມືຂ້າງໜຶ່ງຂອງລາວ ແລະ ຫຼິ້ນກັບມັນ.



ວາງລູກຂອງທ່ານນອນທາງຂ້າງຂອງລາວໃສ່ຜ້າຜືນໜຶ່ງສຳລັບໜູນລາວເພື່ອຈະນຳໃຊ້ມືສອງເບື້ອງຂອງລາວໃຫ້ສາມາດຫລິ້ນຕາມທຳມະຊາດ.



ຈື່ໄວ້ວ່າ ວ່າວັດຖຸນ້ອຍສາມາດເຮັດໃຫ້ເດັກນ້ອຍຫາຍໃຈບໍ່ອອກ, ເຈົ້າຄວນຈະໃຫ້ລາວຢຸດຫຼິ້ນ ຖ້າວ່າລາວເມື່ອຍຈັບວັດຖຸ ຫຼືວ່າເຄື່ອງຫຼິ້ນນ້ອຍໆ ວິທີທາງທັງໝົດແມ່ນນຳໄປໃສ່ປາກຂອງລາວ.

ເອົາສິ່ງຂອງໃຫ້ລາວຈັບ ລາວຈະຮູ້ສຶກມີຄວາມແຕກຕ່າງກັນ ໃນແຕ່ລະອັນ ເມື່ອລາວສຳຜັດພວກມັນ, ເຊັ່ນທ່ອນລຽບອັນໜຶ່ງ, ເສື້ອຜ້າທີ່ບໍ່ລຽບ ແລະ ເສື້ອຜ້າທີ່ບໍ່ອ່ອນນຸ້ມ, ນອກຈາກນັ້ນ ເຈົ້າສາມາດຊຸກຍູ້ໃຫ້ລາວດຶງເອົາວັດຖຸ ເຊັ່ນ: ສາຍທີ່ມັດເຄື່ອງຫຼິ້ນແພ້ນ ຫຼືວ່າ ເຊືອກຂອດມົນໆ. ຖ້າຫາກວ່າເຈົ້າດຶງມັນໜ້ອຍໜຶ່ງ, ລາວອາດຈະດຶງມັນຍາກຂຶ້ນ.




ລະມັດລະວັງລາວອາດຈະກືນກິນພວກມັນ
ພວກມັນຈະຄາຄໍຂອງລາວ




ພະຍາຍາມນວດໃຫ້ທົ່ວຕົນໂຕຂອງລາວຢ່າງເບົາໆ, ໂດຍການໃຊ້ນ້ຳມັນພືດ, ຫຼືຄີມທາຜິວ ເພື່ອເຮັດໃຫ້ຫອມ ຫຼື ເຮັດໃຫ້ຜິວໜັງດີຂຶ້ນ, ຫຼື ດ້ວຍມືເປົ່າຂອງເຈົ້າ. ເລີ່ມຕົ້ນຈາກໜ້າເອິກຂອງລາວ ແລະ ເຄື່ອນຍ້າຍອອກໄປຫຼັງມືຂອງລາວ. ຈາກນັ້ນ ເຄື່ອນຍ້າຍກັບໄປທີ່ກົ້ນ ແລະ ຕໍ່າລົງໄປທີ່ຂາຂອງລາວ.




ຫຼັງຈາກລາວຄຸ້ນເຄີຍກັບການນວດຂອງເຈົ້າແລ້ວ, ພະຍາຍາມໃຊ້ຜ້າທີ່ມີເນື້ອຫຍາບ ຫຼືລະອຽດແຕກຕ່າງກັນ ເພື່ອມາຖູຕົນໂຕຂອງລາວຄ່ອຍໆ. ຫຼັງຈາກນັ້ນ, ສົ່ງເສີມໃຫ້ລາວໄດ້ສຳຜັດພາກສ່ວນທີ່ແຕກຕ່າງກັນ ຂອງຕົນໂຕຂອງລາວ ຕົວຢ່າງ, ສຳຜັດມືຂອງລາວ ຫຼືວ່າ ສຳຜັດຂາຂອງລາວ

ສຳຜັດມື ແລະ ຕີນຂອງລາວ ເມື່ອເວລາເຈົ້າຫຼິ້ນຢູ່ກັບລາວ. ຕົບພວກມັນຄ່ອຍໆ ຫຼືວ່າ ເປົ່າພວກມັນຢ່າງເບົາໆ ແລະ ບອກຊື່ພວກມັນ.

## ການຊ່ວຍໃຫ້ລູກຂອງທ່ານພັດທະນາການຄວບຄຸມຫົວຂອງລາວ.

ກ້າມຄໍຂອງເດັກນ້ອຍຜູ້ໜຶ່ງຂະຫຍາຍຕົວແຂງແຮງ ເມື່ອເວລາລາວນອນເມບຢູ່ເທິງທ້ອງແມ່ຂອງລາວ ແລະ ຍົກຫົວຂອງລາວຂຶ້ນ. ເດັກນ້ອຍຜູ້ທີ່ສາມາດເບິ່ງເຫັນຈະຍົກຫົວຂອງລາວຂຶ້ນເພື່ອເບິ່ງສິ່ງໃດສິ່ງໜຶ່ງ, ແຕ່ວ່າເດັກນ້ອຍຜູ້ທີ່ບໍ່ສາມາດເບິ່ງເຫັນຕ້ອງການເຫດຜົນອື່ນ ເພື່ອຍົກຫົວຂອງລາວ ເດັກນ້ອຍຫຼາຍໆຄົນອາດຈະບໍ່ມັກນອນຢູ່ເທິງທ້ອງແມ່ຂອງພວກເຂົາ. ລູກຂອງທ່ານອາດຈະຕັ້ງໃຈຂື້ນຕື່ມທີ່ຈະເຮັດມັນ ຖ້າຫາກວ່າເຈົ້າ:




ວາງລູກຂອງເຈົ້າໃສ່ໜ້າເອິກຂອງເຈົ້າ. ຖ້າຫາກວ່າໜ້າຂອງລາວໃກ້ໜ້າຂອງເຈົ້າ, ລາວຈະຕ້ອງການຍົກຫົວຂອງລາວ ເມື່ອລາວໄດ້ຍິນສຽງຂອງເຈົ້າ ຫຼືວ່າ ລາວອາດຈະຕ້ອງການຈັບໜ້າຂອງເຈົ້າ. ນອກຈາກນັ້ນ ເຈົ້າສາມາດວາງແຂນເຈົ້າອ້ອມໂຕຂອງລາວ ແລະ ຊຸ້ນໂຕຂອງລາວໄປທາງໜ້າ ແລະ ທາງຫຼັງພ້ອມ.




ວາງລູກຂອງເຈົ້າໄວ້ເທິງຫົວເຂົ່າຂອງເຈົ້າ, ໃນຂະນະທີ່ໃຊ້ມືຂອງເຈົ້າຊ່ວຍເຫຼືອລາວ. ຈັບລາວໄວ້ ແລະ ເຄື່ອນຍ້າຍຫົວເຂົ່າຂອງເຈົ້າ. ນີ້ແມ່ນເປັນສິ່ງທີ່ງ່າຍໃນການຈັບລູກຂອງທ່ານໄວ້ ແລະ ສົ່ງເສີມໃຫ້ລາວຍົກຫົວຂອງລາວ ແລະ ເຮັດໃຫ້ກ້າມຄໍຂອງລາວແຂງແຮງຂຶ້ນ. ນອກຈາກນັ້ນ ມັນຍັງຊ່ວຍໃຫ້ລາວກະກຽມ ເພື່ອເຄື່ອນໄປຍ່າງຊ້າໆ.

ປ່ອຍໃຫ້ລູກຂອງທ່ານໄດ້ຍິນສຽງເຄື່ອງຫຼິ້ນທີ່ມີສຽງດັງ ແລະ ຈາກນັ້ນ ສັ່ນມັນໃຫ້ຢູ່ສູງຈາກຫົວຂອງລາວປະມານສິບຫ້າຊັງຕີແມັດ (ຫົກນີ້ວ). ລາວຈະຍົກຫົວຂອງລາວຂຶ້ນໄປຫາສຽງສະເໝີ.



## ເພື່ອຊ່ວຍລູກຂອງທ່ານຄົ້ນຫາວັດຖຸໂດຍຜ່ານການດົມກິ່ນ ແລະ ຊີມລົດ

ເດັກນ້ອຍຮຽນຮູ້ກ່ຽວກັບການຄົ້ນຫາໄລຍະທຳອິດຈາກການຊີມທຸກສິ່ງທຸກຢ່າງດ້ວຍປາກຂອງພວກເຂົາ. ນີ້ແມ່ນສຳຄັນເປັນພິເສດສຳລັບເດັກນ້ອຍຜູ້ທີ່ບໍ່ສາມາດເຫັນດີ ເພາະວ່າພວກເຂົາຈຳຕ້ອງຮຽນຫຼາຍໂດຍຜ່ານປະສາດທັງຫ້າຂອງພວກເຂົາ. ທຸກສິ່ງທີ່ເດັກນ້ອຍຫຼິ້ນຄວນຈະສະອາດ ແລະ ໃຫຍ່ ເພື່ອວ່າຈະບໍ່ຄາຄໍເດັກນ້ອຍ.

ໃຊ້ນິ້ວມືຂອງເຈົ້າສຳຜັດປາກເດັກນ້ອຍເບົາໆ. ບອກໃຫ້ລາວດູດນິ້ວມືຂອງເຈົ້າ ແລະ ຄົ້ນຫາມັນ.







ເມື່ອລູກຂອງທ່ານສາມາດຈັບວັດຖຸດ້ວຍຕົວຂອງລາວເອງ, ສົ່ງເສີມໃຫ້ລູກຄົ້ນຫາລົດຊາດ ແລະ ກິ່ນຂອງພວກມັນ.

## ມີຫຼາຍປະເພດຂອງການສຳຜັດທີ່ແຕກຕ່າງກັນ ເພື່ອຊ່ວຍໃຫ້ເດັກນ້ອຍຈັບ.

ຫຼິ້ນເກມອັນໜຶ່ງໂດຍການຈຸ່ມພາກສ່ວນຮ່າງກາຍຂອງລາວລົງໃນນ້ຳ, ພ້ອມທັງບອກຊື່ແຕ່ລະພາກສ່ວນ.







ສົ່ງເສີມໃຫ້ລາວສຳຜັດສິ່ງຂອງປະເພດໜ້າສົນໃຈ ແລະ ແໜ້ນໜາ ແຕ່ຕ້ອງແມ່ນບ່ອນທີ່ມີອາກາດປອດໂປ່ງ ແລະ ສົດໃສ ເຊັ່ນ: ໝາກໄມ້, ພືດຜັກ, ຫຼືວ່າ ດອກໄມ້.

## ເພື່ອຊ່ວຍເດັກນ້ອຍກຽມພ້ອມທີ່ຈະປີ້ນໂຕຂອງລາວ ຫຼືວ່າ ຂວ້ຳ.

ເດັກນ້ອຍຮຽນຮູ້ການປີ້ນໂຕເພື່ອຢື້ເອົາສິ່ງຂອງ. ຖ້າຫາກວ່າ ລູກຂອງທ່ານບໍ່ສາມາດເຫັນ, ເຈົ້າອາດຈະຕ້ອງຊ່ວຍລາວຮຽນປີ້ນໂຕ. ເຊັ່ນຫົວຂອງລາວ, ຄໍຂອງລາວ ແລະ ບ່າທັງສອງຂອງລາວໃຫ້ແຂງແຮງ, ເຈົ້າຈະສັງເກດເບິ່ງລູກຂອງເຈົ້າຍົກຫົວຂອງລາວຄຶງໄວ້ ແລະ ປ່ຽນແປງເມື່ອລາວໄດ້ຍິນສຽງ. ໃນຂະນະນັ້ນ ລາວກຽມພ້ອມທີ່ຈະປີ້ນໂຕ.

ເມື່ອເດັກນ້ອຍນອນເໝບ, ສັ່ນເຄື່ອງຫຼິ້ນທີ່ມີສຽງຢູ່ເທິງຫົວຂອງລາວ ເພື່ອຊຸກຍູ້ໃຫ້ລາວຍົກຫົວຂອງລາວຂຶ້ນ. ເມື່ອລາວຈັບເຄື່ອງຫຼິ້ນ, ເຄື່ອນຍ້າຍມັນມາທາງຫຼັງຂອງລາວ ເພື່ອຊ່ວຍລາວປີ້ນໂຕລາວຄືນໄປທາງຫຼັງຂອງລາວ.




ວາງລູກຂອງທ່ານນອນແຕງລິງຢູ່ໃນຜ້າປູພື້ນໜຶ່ງ ມີໝອນຢູ່ທາງຫຼັງຂອງລາວ. ສັ່ນເຄື່ອງຫຼິ້ນທີ່ມີສຽງຢູ່ທາງໜ້າຂອງລາວ. ຈາກນັ້ນ ເຄື່ອນຍ້າຍເຄື່ອງຫຼິ້ນລົງຫາພື້ນ. ຈາກນັ້ນ ລາວຈະໝູນຫົວຂອງລາວ ແລະບ່າລາວໄປຕາມມັນ ແລະ ລາວກໍຈະປີ້ນໄປເໝບ.



## ເດັກນ້ອຍອາຍຸຕັ້ງແຕ່ 4 ເດືອນ ຫາ 6 ເດືອນ.

ເມື່ອເດັກນ້ອຍຜູ້ໜຶ່ງໃຫຍ່ຂຶ້ນໜ້ອຍໜຶ່ງລາວສາມາດ:

- ຍິ້ມຕອບສຳນຽງ ຫຼືວ່າ ສຽງທີ່ຄຸ້ນເຄີຍ
- ຄົ້ນຫາສິ່ງທີ່ສຳຄັນຂອງລາວ ເພື່ອຮຽນຮູ້ສິ່ງທີ່ລາວມັກ
- ເຮັດໃຫ້ມີສຽງຄືຖ້ອຍຄຳນັ້ນ ແຕ່ວ່າບໍ່ໃຊ້ຄວາມຮູ້ສຶກ (ເວົ້າໄວໆແບບບໍ່ເປັນຖ້ອຍຄຳ)
- ນຳວັດຖຸຢູ່ໃນມືຂອງລາວໄປຫາປາກຂອງລາວ
- ເຄື່ອນຍ້າຍວັດຖຸຈາກມືຂ້າງໜຶ່ງໄປຫາອີກຂ້າງໜຶ່ງ
- ຢື້ເອົາເຄື່ອງຫຼິ້ນທີ່ລາວໄດ້ຍິນ, ລູບຄຳ ຫຼືວ່າ ເບິ່ງ
- ປິ້ນຈາກທາງຫຼັງໄປທາງໜ້າຂອງລາວ ແລະ ປິ້ນຈາກເບື້ອງໜ້າກັບຄືນເບື້ອງຫຼັງ
- ກຽມພ້ອມສຳລັບນັ່ງ ແລະ ເຄື່ອນໄປຢ່າງຊ້າໆ (ຕົວຢ່າງ, ໂດຍການພະຍາຍາມດຸນດ່ຽງໃນຂະນະທີ່ນັ່ງຢູ່ໃນຫົວເຂົ່າຂອງຜູ້ໃດຜູ້ໜຶ່ງ).

**ເດັກນ້ອຍຜູ້ທີ່ຕາບອດອາຍຸຢູ່ໃນລະຫວ່າງນີ້, ອາດຈະເລີ່ມຕົ້ນເຮັດຊ້ຳຫຼາຍຂຶ້ນ ແລະ ຫຼາຍຂຶ້ນ.**



ເດັກນ້ອຍຜູ້ທີ່ຕາບອດເຮັດສິ່ງແປກປະຫລາດຊ້ຳຄືນຫຼາຍຂຶ້ນ ແລະ ຫຼາຍຂຶ້ນເລື້ອຍໆ ເຊັ່ນ: ສີຕາຂອງລາວ, ສີໄປສີມາດ້ວຍມືຂອງລາວ ແລະ ໂຍກໂຕຂອງລາວ. ບໍ່ມີໃຜຈັກຄືນຮູ້ແນ່ນອນວ່າເປັນຫຍັງມັນຈຶ່ງເກີດຂຶ້ນ. ບາງທີມັນອາດຈະມີທາງເປັນໄປໄດ້ເພາະວ່າເດັກນ້ອຍທຸກໆຄົນ ຕ້ອງການຄົ້ນຫາ ແລະ ຫຼິ້ນ. ຖ້າຫາກວ່າ ລາວບໍ່ຮູ້ວ່າມີສິ່ງທີ່ໜ້າສົນໃຈຢູ່ອ້ອມຂ້າງຂອງລາວ, ເດັກນ້ອຍຜູ້ໜຶ່ງກໍ່ຈະຫຼິ້ນກັບວັດຖຸພຽງແຕ່ສິ່ງດຽວທີ່ລາວຮູ້ດ້ວຍຕົນເອງ. ເຈົ້າອາດຈະສັງເກດເບິ່ງການເຄື່ອນຍ້າຍເຫຼົ່ານີ້ ກ່ອນລູກຂອງທ່ານມີອາຍຸໄດ້ຫົກເດືອນ. ການເຄື່ອນຍ້າຍເຫຼົ່ານີ້ອາດຈະເປັນຜົນເສຍຕໍ່ການພັດທະນາຂອງລາວ ຖ້າຫາກວ່າພວກທ່ານຍ້າຍເດັກອອກຈາກບ່ອນທີ່ລາວກຳລັງຕັ້ງໃຈຫຼິ້ນສິ່ງຂອງຢູ່ອ້ອມໂຕຂອງລາວເຊັ່ນດຽວກັນ ການເຕີບໂຕລາວ, ເດັກນ້ອຍຜູ້ອື່ນໆ ອາດຈະບໍ່ຕ້ອງການຫຼິ້ນກັບລາວ ເພາະວ່າ ການເຄື່ອນຍ້າຍຂອງລາວ ເຮັດໃຫ້ພວກເຂົາຕົກໃຈຢ້ານ.



ກິດຈະກຳຢູ່ໃນບົດນີ້ ຈະໃຫ້ລູກຂອງທ່ານມີໂອກາດຫຼາຍທີ່ຈະຮຽນຮູ້ສິ່ງໃໝ່ໆ. ຊຸກຍູ້ໃຫ້ລູກຂອງທ່ານຄົ້ນຫາ ແລະ ຫຼິ້ນ ແລະ ລາວອາດຈະເຮັດການເຄື່ອນຍ້າຍເຫຼົ່ານີ້ໜ້ອຍລົງ ແລະ ໜ້ອຍລົງເລື້ອຍໆ.

## ການສົ່ງເສີມໃຫ້ລູກຂອງທ່ານຢື້ເອົາສິ່ງຂອງ ແລະ ຈັບພວກມັນ.




ປ່ອຍໃຫ້ລາວສຳຜັດວັດຖຸທີ່ຮູ້ສຶກວ່າມີຄວາມຫຍຸ້ງຍາກ ຍົກຕົວຢ່າງ ຈຳຕ້ອງຢື້ໄກອອກໄປ. ຖ້າຫາກວ່າລາວ ແຂງແຮງພຽງພໍ, ສິ່ງເຮັດດ້ວຍຂົນສັດ, ສິ່ງທີ່ມື່ນ, ຫຼືວ່າ ເຄື່ອງຫຼິ້ນທີ່ເຕັ້ນ. ຫຼັງຈາກ ລາວເລີ່ມຫຼິ້ນກັບພວກມັນ, ພຽງ ແຕ່ເຄື່ອນຍ້າຍພວກມັນ ອອກຈາກການຢື້ຂອງລາວ. ເຄາະວັດຖຸຄ່ອຍໆກັບພື້ນ, ເພື່ອໃຫ້ລາວຮູ້ວ່າ ວັດຖຸຢູ່ໃສ.



ສັ່ນວັດຖຸທີ່ມີສຽງຈົນກະທັ້ງວ່າລາວຢື້ເອົາມັນ. (ທຳອິດທ່ານ ອາດຈະຕ້ອງການຍູ້ແຂນສອກຂອງລາວເບົາໆ ໄປຫາວັດຖຸ) ຈາກນັ້ນ ຊຸກຍູ້ໃຫ້ລາວສັ່ນ ແລະ ເຄື່ອນຍ້າຍມັນຈາກມື ເບື້ອງໜຶ່ງໄປຫາມືເບື້ອງໜຶ່ງ. ນີ້ແມ່ນຈະຊ່ວຍໃຫ້ ລາວຮຽນຮູ້ສຽງມາຈາກໃສ ແລະ ນອກຈາກນັ້ນ ແຂນຂອງລາວກໍ່ຈະແຂງແຮງຂຶ້ນ.

ມັດວັດຖຸໃສ່ກັບເສື້ອຜ້າລູກຂອງທ່ານ ຫຼືວ່າ ມືດ້ວຍເສັ້ນດ້າຍສັ້ນຫ້ອຍໄວ້. ຖ້າຫາກວ່າ ລາວຖິ້ມເຄື່ອງຫຼິ້ນລົງ, ມັນເປັນສິ່ງນຳທາງ ໃຫ້ມືຂອງລາວຕາມເສັ້ນດ້າຍຈົນກວ່າ ລາວ ໄປຮອດສິ້ນຂອງມັນ. ນີ້ຈະຊຸກຍູ້ໃຫ້ລາວ ໄປຮອດ ແລະ ຮຽນຮູ້ສິ່ງນັ້ນດ້ວຍຕົວຂອງ ລາວເອງ ເຖິງວ່າລາວຖິ້ມວັດຖຸລົງມັນກໍ່ບໍ່ ເສຍໄປ.





ຫ້ອຍວັດຖຸສອງສາມອັນໄວ້ ໃນສະຖານທີ່ເກົ່າ ເພື່ອວ່າ ລາວສາມາດຮຽນຮູ້ຊອກຫາ ວ່າພວກມັນຢູ່ໃສ.

## ການຊ່ວຍລູກຂອງທ່ານຮຽນປີ້ນໂຕ ( ຫຼືວ່າຂວ້ຳ ).

ຖ້າຫາກວ່າທ່ານນຳໃຊ້ກິດຈະກຳຢູ່ໜ້າທີ 39, ທ່ານຊ່ວຍລູກຂອງທ່ານໂດຍການດຶງເຄື່ອງຫຼິ້ນອັນໜຶ່ງ, ຫຼືວ່າ ໂດຍການວາງສິ່ງໃດໜຶ່ງຢູ່ທາງຫຼັງຂອງລາວ. ຂະນະນີ້ລາວສາມາດຮຽນປີ້ນໂຕ ຫຼືວ່າ ຂວ້ຳໂດຍໄດ້ຮັບການຊ່ວຍເຫຼືອໜ້ອຍລົງ.




ເມື່ອລູກຂອງທ່ານນອນເໝບຢູ່ໃຊ້ວັດຖຸທີ່ລາວສົນໃຈ ແລະ ມີສຽງດັງອັນໜຶ່ງສັ່ນໃຫ້ລາວໄດ້ຍິນ ແລະ ເຂົ້າໃຈ, ຄືດັ່ງທີ່ເຈົ້າໄດ້ເຮັດມາກ່ອນແລ້ວ. ແຕ່ວ່າເມື່ອເວລາລາວຢື້ເອົາວັດຖຸຢູ່ທາງຂ້າງ, ເຄື່ອນຍ້າຍມັນສູງຂຶ້ນ ຫຼັງຈາກນັ້ນລາວຈະບິດແອວໄປທາງຂ້າງຂອງລາວ, ແລະ ຈາກນັ້ນບິດຄືນຫຼັງຂອງລາວ.




ເມື່ອລູກຂອງທ່ານນອນຫງາຍຢູ່, ຊຸກຍູ້ໃຫ້ລາວຈັບເອົາວັດຖຸທີ່ມີສຽງດັງອັນໜຶ່ງຢູ່ທາງຂ້າງ. ຊ່ວຍໃຫ້ລາວໝູນໂຕຂອງລາວໄປຫາເຄື່ອງຫຼິ້ນທີ່ມີສຽງຢູ່ທາງຂ້າງ ແລະ ທ້ອງຂອງລາວພ້ອມ.

## ການກະກຽມເພື່ອໃຫ້ລູກຂອງທ່ານນັ່ງ.

ຖ້າຫາກວ່າລູກຂອງທ່ານຍັງບໍ່ທັນໄດ້ນັ່ງດ້ວຍຕົວລາວເອງເທື່ອ, ກິດຈະກຳເຫຼົ່ານີ້ສາມາດຊ່ວຍໃຫ້ລາວກຽມພ້ອມທີ່ຈະນັ່ງ.




ວາງເດັກນ້ອຍຢູ່ເທິງຫົວເຂົ່າຂອງທ່ານ, ເບື້ອງໜ້າທ່ານ ແລະ ຊ່ວຍເຫຼືອຢູ່ທາງຫຼັງຂອງລາວ.




ນັ່ງຢູ່ທາງຫຼັງລູກຂອງທ່ານ, ລໍຖ້າຊ່ວຍເຫຼືອລາວບາງສິ່ງບາງຢ່າງ.




ວາງເດັກນ້ອຍແບບຫຼິ້ມໆຢູ່ເທິງຫົວເຂົ່າຂອງທ່ານ. ຍົກຫົວເຂົ່າຂ້າງໜຶ່ງຂຶ້ນຢ່າງຊ້າໆ ເພື່ອວ່າ ລາວຮຽນຮູ້ໄລຍະສັ້ນໆໄປອີກຂ້າງໜຶ່ງ. ຈາກນັ້ນຂົດຫົວເຂົ່າເບື້ອງໜຶ່ງເຂົ້າ. ລາວຈະຮຽນຍ້າຍຕົວຂອງລາວເພື່ອເຮັດໃຫ້ດຸນດ່ຽງ.

## ການຊ່ວຍລູກຂອງທ່ານກະກຽມເພື່ອຄານໄປຢ່າງຊ້າໆ.

ເພື່ອທີ່ຈະຄານໄປ, ເດັກນ້ອຍຕ້ອງການໃຫ້ແຂນ ແລະ ບ່າແຂງແຮງ. ນອກຈາກນັ້ນ ລາວຈຳຕ້ອງສາມາດເຮັດໃຫ້ດຸນດ່ຽງ ຂະນະທີ່ເຄື່ອນຍ້າຍນ້ຳໜັກໂຕຂອງລາວຈາກຂ້າງໜຶ່ງໄປອີກຂ້າງໜຶ່ງ, ກິດຈະກຳເຫຼົ່ານີ້ສາມາດຊ່ວຍລາວ.

ວາງລູກຂອງທ່ານຄຶງຕົວດ້ວຍມື ແລະ ຫົວເຂົ່າຂອງລາວຢູ່ເທິງໝອນ ຫຼືວ່າ ຜ້າຫົ່ມອັນໜຶ່ງ. ເຊິ່ງຄວນຈະໃຫຍ່ໃຫ້ພຽງພໍຊ່ວຍຄ້ຳໝູນຮ່າງກາຍລາວ, ແຕ່ວ່ານ້ອຍພໍດີທີ່ລາວຈຳຕ້ອງຄາບຮັບນ້ຳໜັກໂຕຂອງລາວເອງ. ຈັບລາວໄວ້ເບົາໆ ຂະນະທີ່ລາວໄປທາງໜ້າ ແລະ ກັບຄືນທາງຫຼັງ ແລະ ຈາກຂ້າງໜຶ່ງໄປຫາອີກຂ້າງໜຶ່ງ.







ວາງລູກຂອງທ່ານໃຫ້ຢູ່ເທິງຂາຂອງທ່ານ ຫຼືວ່າ ກໍ້ຜ້າອັນໜຶ່ງ. ສິ່ງເສີມໃຫ້ລາວຢື້ເອົາເຄື່ອງຫຼິ້ນອັນໜຶ່ງຢູ່ທາງຂ້າງໜຶ່ງ, ຂະນະທີ່ແຂນ ແລະ ຫົວເຂົ່າຮັບນ້ຳໜັກໂຕຂອງລາວຢູ່ອີກຂ້າງໜຶ່ງ, ເຮັດຄືນຄືເກົ່າຢູ່ທາງຂ້າງອື່ນ.

## ການຊ່ວຍໃຫ້ລູກຂອງທ່ານມີຄວາມສຸກໃນການເຄື່ອນຍ້າຍ ແລະ ຮູ້ສຶກປອດໄພຕໍ່ຕົວຂອງລາວໃນການເຄື່ອນຍ້າຍ.

ທ່ານສາມາດຊ່ວຍໃຫ້ລູກຂອງທ່ານມີຄວາມສຸກໃນການເຄື່ອນຍ້າຍ ໂດຍການປ່ອຍໃຫ້ລາວເຄື່ອນຍ້າຍໃນຫຼາຍວິທີທາງທີ່ແຕກຕ່າງກັນ. ຂະນະທີ່ເຈົ້າເຮັດກິດຈະກຳເຫຼົ່ານີ້ລົມກັບລາວຕະຫລອດເວລາ. ນີ້ຈະຊ່ວຍໃຫ້ລາວຮູ້ສຶກຢ້ານໜ້ອຍລົງ ເມື່ອເວລາເຮັດບາງສິ່ງບາງຢ່າງໃໝ່ໆ ຕົວຢ່າງເຊັ່ນ:




ໄກວໃຫ້ລາວກິ້ງໄປມາໃນຜ້າທີ່ກວ້າງຜືນໜຶ່ງ ຫຼືວ່າ ເປ




ຫຼີ້ນເກມອັນໜຶ່ງ ເຈົ້າ ແລະ ຄົນຜູ້ອື່ນໆຜ່ານເດັກນ້ອຍທາງຫຼັງ ແລະ ທາງໜ້າລະຫວ່າງເຈົ້າ.

ສ້າງການເຄື່ອນຍ້າຍຮ່າງກາຍຂຶ້ນມາເພື່ອເຮັດນຳກັນ. ຂີດຂາຂອງລາວເຂົ້າ ແລະ ເຄື່ອນຍ້າຍພວກມັນໄປທາງຫຼັງ ແລະ ທາງໜ້າ. ຊ່ວຍລາວນຳມືຂອງລາວມາໃສ່ກັນຜ່ານໃຈກາງຮ່າງກາຍຂອງລາວ ແລະ ກັບຄືນອີກ. ນຳມືຂອງລາວຫາກັນ ແລະ ຕົບກັນ ໃຊ້ຖ້ອຍຄຳເກົ່າທຸກໆເທື່ອບອກຊື່ສິ່ງທີ່ເຈົ້າເຮັດ.







ມັດຜ້າເຈ່ຍລູກຂອງທ່ານຢູ່ທາງຫຼັງຂອງທ່ານ ແລະ ຈາກນັ້ນ ແລ່ນ ຫຼືວ່າ ກະໂດດ.